ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=============

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 3328 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 16 SEP 2015

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງສູນບໍລິການຈັດຫາງານ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 138/ນຍ, ລົງວັນທີ 04 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ອີງຕາມແຈ້ງການຂອງຄະນະເລຂາທິການລັດຖະບານສະບັບເລກທີ 213/ຄລບ, ລົງວັນທີ 4/1/08 ເຫັນດີໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມສ້າງຕັ້ງສູນບໍລິການຈັດຫາງານ.
- ອີງຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 1037/ຮສສ.ຈພງ, ລົງວັນທີ 11 ກັນຍາ 2015.

## ລັດຖະມົນຕີວ່າການ
## ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງສູນບໍລິການຈັດຫາງານ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ.**

ສູນບໍລິການຈັດຫາງານ ໂດຍມີຊື່ຫຍໍ້ວ່າ **"ສບງ"** ແລະ ມີຊື່ເປັນພາສາຕ່າງປະເທດວ່າ **Employment Service Center "ESC"** ແມ່ນຫົວໜ່ວຍວິຊາການລະດັບສອງທີ່ຢູ່ໃນໂຄງປະກອບກົງຈັກການຈັດຕັ້ງຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສາຍວິຊາການຂຶ້ນກັບ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ. ສູນບໍລິການຈັດຫາງານ ມີພາລະບົດບາດບໍລິການຈັດຫາງານພາຍໃນ ແລະ ໄປຕ່າງປະເທດ, ການເກັບກຳຂໍ້ມູນດ້ານຕະຫຼາດແຮງງານ, ການປະກັນການວ່າງງານ, ການບໍລິການດ້ານເອກະສານຂໍອະນຸຍາດນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດ, ຄຸ້ມຄອງວິສາຫະກິດບໍລິການຈັດຫາງານ ລວມເຖິງການປັບປຸງ, ຄຸ້ມຄອງສາຂາບໍລິການຈັດຫາງານ ທີ່ຂຶ້ນກັບສູນບໍລິການຈັດຫາງານ ໃນທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່.**

3.1 ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ທິດທາງແຜນການຂອງລັດຖະບານ ໂດຍສະເພາະແມ່ນ